ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ 2574/ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 19/8/2025

ໜັງສືແຈ້ງເຊີນ

ເຖິງ: ບັນດາ ໂຮງພິມພາກລັດ ແລະ ເອກະຊົນ ຢູ່ພາຍໃນ ສປປ ລາວ.

ເລື່ອງ: ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປະຕິທິນ ປະຈຳປີ 2026.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ໂຮງພິມພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາຜະລິດປະຕິທິນ ປະຈຳປີ 2026 ໃຫ້ ທຄຕລ ຕາມລາຍລະອຽດລຸ່ມນີ້:

ລ/ດ	ລາຍການ	ລາຍລະອຽດ
1	**ປະຕິທິນ ແຂວນຝາ:** ຈຳນວນ 50,000 ອັນ	• ຂະໜາດ: 45*70 cm (2 ເດືອນ/ໜ້າ). • ເຈ້ຍໜາ 160 ແກຼມ, ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມ ໜ້າປົກ. • ໃສ່ຢ່ວງສີທອງ ເຕັມຫົວ. • ການຫຸ້ມຫໍ່: ແຕ່ລະອັນຖົງຢາງໃສ, 50 ອັນ/ແກັດ.
2	**ປະຕິທິນຕັ້ງໂຕະ:** ຈຳນວນ 60,000 ອັນ	• ຂະໜາດ: 17*21*9 cm (2 ເດືອນ/ໜ້າ) • ເຈ້ຍໜາ 200 ແກຼມ; ຂາຕັ້ງສີແດງ-ໜາ 1,200 ແກຼມ • ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ. • ໃສ່ຢ່ວງສີທອງ ເຕັມຫົວ. • ການຫຸ້ມຫໍ່: 50 ອັນ/ແກັດ. • ຊອງເຈ້ຍສີຂາວ ພິມໂລໂກ້ ທຄຕລ, ສຳລັບໃສ່ປະຕິທິນ 500 ຊອງ/ແກັດ, ລວມທັງໝົດແມ່ນ 60,000 ຊອງ.

ໝາຍເຫດ:

- ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ.
- ຜູ້ສະໜອງສາມາດມາເບິ່ງຕົວຢ່າງສິນຄ້າຂອງ ທຄຕລ ໄດ້ນັບຈາກວັນນີ້ເປັນຕົ້ນໄປ ຈົນເຖິງວັນທີ 29/08/2025 ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສຳນັກງານໃຫຍ່ ທຄຕລ, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາ ຄານ C.

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້**:

***ເອກະສານຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບສິ່ງພິມ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 03 ປີ (2022-2024) ແລະ ເອກະສານກ່ຽວກັບຜົນງານການຜະລິດປະຕິທິນຜ່ານມາ.
2. ຕົວຢ່າງເຈ້ຍ ແລະ ຢ່ວງທອງ ຢ່າງໜ້ອຍ 2 ຊຸດ (ແຂວນຝາ 1 ແລະ ຕັ້ງโต๊ะ 1), ພ້ອມທັງກຳນົດລາຍລະອຽດຕາມສະເປັກຂ້າງເທິງ (ຕາມ Format ຄັດຕິດມາພ້ອມນີ້).
3. ສາມາດຍື່ນເອກະສານຂ້າງເທິງໄດ້ ໂດຍການສົ່ງຜ່ານເປັນ PDF ເຂົ້າ Email: procurement@bcel.com.la ແລະ ສົ່ງສິນຄ້າຕົວຢ່າງທີ່ ພະແນກຫ້ອງການບໍລິຫານ-ການເງິນ, ກ່ອນວັນສຸກ, ທີ 29/08/2024 ເວລາ 11:00 ໂມງ.

***ເອກະສານຊອງທີ 2 (ປິດຊອງ)**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາໃນ ວັນພຸດ, ທີ **10/09/2025 ເວລາ 9:00** ໂມງ, ເຊິ່ງຜູ້ສະໜອງຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າ ເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ຕຶກ C ສຳນັກງານໃຫຍ່ ທຄຕລ.
2. ຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງ ຂອງ ທຄຕລ ການໃນຕາຕະລາງຂ້າງເທິງນັ້ນ.
3. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/11/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

***ໝາຍເຫດ**:

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ/ສິນຄ້າຕົວຢ່າງ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນ ລັດຖະການ.

***ເງື່ອນໄຂການປະມູນສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດປະຕິທິນຕົວຈິງ 01-02 ຊຸດ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ, ພ້ອມນັ້ນ **ຜູ້ສະໜອງຈະຕ້ອງ ນຳປະຕິທິນໄປຜ່ານກະຊວງຖະແຫຼງຂ່າວ-ວັດ**

ທະນະທຳ ແລະ ຕ້ອງມີຄວາມສາມາດຈັດພິມຈຳນວນທັງໝົດໃຫ້ສຳເລັດພາຍໃນ 40 ວັນນັບຈາກມື້ຮອງຮັບແບບ.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ຕິດຕໍ່ພົວພັນ: ຂະແໜງສະໜອງວັດຖຸເຕັກນິກ
021 213200 ຕໍ່ 414 (ໃນເວລາລັດຖະການ)

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ທຄຕລ, ລົງວັນທີ ……..

ລ/ດ	ຜູ້ສະໜອງ	ເງື່ອນໄຂ									ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຢັ້ງຢືນການເສຍອາກອນ	ໃບ ອະນຸຍາດ ດຳເນີນ ທຸລະກິດ	ໄລຍະ ເວລາໃນ ການ ດຳເນີນ ທຸລະກິດ	ຜົນງານຜ່ານມາ (ທີ່ ເຄີຍສະໜອງ ໃຫ້ພາກສ່ວນ ໃດແນ່)	ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ	ປະເທດຜະລິດ	ການ ຮັບປະກັນ ສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ……	(xxx/ 02.01.2015)	(xxx/ 02.01.2015)	(xxx/ 02.01.2015)	…. ປີ	(ໃຫ້ລະບຸ)		ພາຍນ ຫຼື ຕ່າງປະເທດ	…. ປີ	……	

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ:

70cm

45cm

17cm

9cm

21cm